ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

oooooooooo

ແຂວງຜົ້ງສາລີ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 698 /ພຊສ

ວັນທີ 27 SEP 2013

# ໃບຢັ້ງຢືນ

## ຮັບຮອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນຂອງໂຄງການຍ່ອຍປັບປຸງລະບົບຊົນລະປະທານ ສາຍນ້ຳອູ, ເມືອງຍອດອູ, ແຂວງຜົ້ງສາລີ.

- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມສະບັບເລກທີ 29/ສພຊ, ລົງວັນທີ 18/12/2012
- ອີງຕາມດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງ ສປປ ລາວ, ສະບັບເລກທີ 112/ນຍ, ວັນທີ 16/02/ 2010
- ອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 1467 /ກຊສ, ລົງ ວັນທີ 9/3/2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງ
- ອີງໃສ່ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນຂອງໂຄງການຍ່ອຍຟື້ນຟູຊົນລະປະທານສາຍນ້ຳອູ, ເມືອງຍອດອູ.
- ອີງໃສ່ໜັງສືສະເໜີຂອງຫົວໜ້າພະແນກກະສິກຳ-ປ່າໄມ້ແຂວງກ່ຽວກັບການຂໍອອກໃບຢັ້ງຢືນສິ່ງແວດລ້ອມໂຄງການຍ່ອຍປັບປຸງລະບົບຊົນລະປະທານນ້ຳອູ, ເມືອງຍອດອູ ສະບັບເລກທີ 589/ພກຊ.ຜລ, ລົງວັນທີ 02/07/2013.

ຜ່ານການຄົ້ນຄວ້າພິຈາລະນາເອກະສານບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນຂອງໂຄງການປັບປຸງຊົນລະປະທານສາຍນ້ຳອູ, ເມືອງຍອດອູ ເຫັນວ່າ: ໂຄງການຍ່ອຍນີ້ແມ່ນມີຜົນປະໂຫຍດໂດຍກົງຕໍ່ການດຳລົງຊີວິດຂອງປະຊາຊົນເນື່ອງຈາກປະຊາຊົນໄດ້ມີນ້ຳເພື່ອໃຊ້ເຂົ້າໃນການຜະລິດກະສິກຳ, ສ່ວນຜົນກະທົບຕໍ່ສິ່ງແວດລ້ອມແມ່ນມີໜ້ອຍ ແລະ ມີຄວາມເໝາະສົມໃນການດຳເນີນການ, ໃນກໍລະນີມີບັນຫາຜົນກະທົບຕໍ່ສິ່ງແວດລ້ອມເກີດຂຶ້ນທີ່ບໍ່ໄດ້ລະບຸໄວ້ໃນບົດປະເມີນຜົນກະທົບສິ່ງແວດລ້ອມແມ່ນໃຫ້ເຈົ້າຂອງໂຄງການຮັບຜິດຊອບໂດຍກົງ.

ດັ່ງນັ້ນ, ທາງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຜົ້ງສາລີຈຶ່ງເຫັນດີອອກໃບຢັ້ງຢືນສະບັບນີ້ໄວ້ເປັນຫຼັກຖານ ໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ, ໃບຢັ້ງຢືນສະບັບນີ້ ມີອາຍຸການນຳໃຊ້ ( 2 ປີ ) ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າພະແນກ
ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ສົມປົນ ພັນແກ້ວ

ໝາຍເຫດ:
1. ໃບຢັ້ງຢືນສະບັບນີ້ຫ້າມບໍ່ໃຫ້ຜູ້ອື່ນນຳໃຊ້ ແລະ ຫ້າມປອມແປງຢ່າງເດັດຂາດ
2. ຜູ້ກະທຳຜິດຕ້ອງໄດ້ຮັບໂທດຕາມລະບຽບກົດໝາຍຂອງ ສປປ ລາວ

30 Sep. 2013 8:46PM P1
FAX NO. :08821027 5
FROM :NRIPSL